# ເປີດການນຳໃຊ້ 5 ຜະລິດຕະພັນໃໝ່ ຂອງ BCEL ຢ່າງເປັນທາງການ.

## ທ່ານພ້ອມຫຼືຍັງທີ່ຈະກ້າວສູ່ຄວາມທັນສະໄໝ ແລະ ມີສ່ວນຮ່ວມແບ່ງປັນນ້ຳໃຈຊ່ວຍເຫຼືອສັງຄົມ ໄປກັບ BCEL

ໃນຍຸກທີ່ເທັກໂນໂລຢີມີຄວາມກ້າວໜ້າສູງ ໂລກເຮົາມີການເຊື່ອມໂຍງໃນທຸກດ້ານ, ທຄຕລ ກໍ່ໄດ້ປັບປຸງການບໍລິການ ໃຫ້ມີຄວາມສະດວກ, ວ່ອງໄວ, ທັນສະໄໝ ເນັ້ນໃສ່ການພັດທະນາຜະລິດຕະພັນຜ່ານລະບົບເອເລັກໂທນິກ ບົນພື້ນຖານຄວາມ ປອດໄພ ແລະ ໄດ້ມາດຕະຖານສາກົນ. ຫຼາຍຜະລິດຕະພັນຂອງ BCEL ໄດ້ຮັບການຍອມຮັບ ແລະ ນຳໃຊ້ຢ່າງແຜ່ຫຼາຍ ຈາກສັງຄົມບໍ່ວ່າຈະເປັນ ບັດ ATM, SMS Banking, i-Bank, BCEL One ແລະ ອື່ນໆ.

ເນື່ອງຈາກ ທຄຕລ ເຫັນໄດ້ຄວາມສຳຄັນ ແລະ ຢາກໃຫ້ລູກຄ້າໄດ້ນຳໃຊ້ການບໍລິການທີ່ທັນສະໄໝຢ່າງຕໍ່ເນື່ອງ ຈຶ່ງໄດ້ພັດທະນາຜະລິດຕະພັນໃຫ້ມີຄວາມຫຼາກຫຼາຍຢ່າງບໍ່ຢຸດຢັ້ງ ຈຶ່ງໄດ້ເປີດໂຕ 5 ຜະລິດຕະພັນໃໝ່ ເພື່ອຕອບສະໜອງຮັບໃຊ້ສັງຄົມ ຢ່າງເປັນທາງການ ໃນວັນທີ 09/02/2018 ທີ່ ໂຮງແຮມດອນຈັນພາເລສ໌ ເປັນກຽດເຂົ້າຮ່ວມໂດຍ **ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ**, ຜູ້ຕາງໜ້າຈາກຄະນະກົມ, ຄະນະພະແນກທີ່ກ່ຽວຂ້ອງຈາກທະນາຄານແຫ່ງ ສປປ ລາວ, ຜູ້ຕາງໜ້າຈາກກະຊວງວິທະຍາສາດ ແລະ ເຕັກໂນໂລຢີ ແລະ ກະຊວງສາທາລະນະສຸກ ບັນດາຄະນະອຳນວຍການ ທຄຕລ, ຜູ້ຕາງໜ້າຈາກທະນາຄານທຸລະກິດລັດ, ບັນດາບໍລິສັດໃນເຄືອ ທຄຕລ, ຄູ່ຮ່ວມທຸລະກິດ ທຄຕລ, ອົງການກາແດງ, ໜ່ວຍກູ້ໄພ, ບັນດານັກທຸລະກິດພາຍໃນ, ພ້ອມດ້ວຍແຂກທີ່ມີກຽດ ແລະ ນັກຂ່າວ-ສື່ມວນຊົນ ຈາກຫຼາຍພາກສ່ວນກໍໄດ້ເຂົ້າຮ່ວມຢ່າງພ້ອມພຽງ.








5 ຜະລິດຕະພັນໃໝ່ນີ້ ລ້ວນແຕ່ເປັນຜະລິດຕະພັນທີ່ທັນສະໄໝຕອບສະໜອງການໃຊ້ຊີວິດໃນປະຈຸບັນເຊິ່ງລວມມີ:

1. BCEL Onepay (ທຸກການຈ່າຍງ່າຍໃນວັນເພ Onepay) ເປັນຜະລິດຕະພັນທີ່ໃຊ້ເພື່ອການຊຳລະຄ່າສິນຄ້າ ແລະ ບໍລິການຕ່າງໆ ຜ່ານ QR Code ພຽງທ່ານມີ BCEL One ແລະ ອິນເຕີເນັດ ກໍ່ສາມາດຊຳລະໄດ້, ຊ່ວຍສົ່ງເສີມຫຼຸດຜ່ອນການນຳໃຊ້ເງິນສົດໃນການຊຳລະຄ່າສິນຄ້າ ແລະ ບໍລິການ, ປະຢັດເວລາ ເໝາະສຳລັບທຸລະກິດຫ້າງຮ້ານຂະໜາດນ້ອຍ ແລະ ກາງ ມີຄວາມສະດວກ, ວ່ອງໄວ, ປອດໄພ, ຕົ້ນທຶນຕ່ຳ, ບໍ່ເສຍຄ່າ ທຳນຽມ, ຈ່າຍຕາມລາຄາສິນຄ້າຕົວຈິງ ແລະ ສາມາດ ກວດສອບໄດ້.
2. BCEL Oneheart (ຫົວໃຈດຽວກັນ): ເປັນຜະລິດຕະພັນ ທີ່ ທຄຕລ ມີຄວາມຕັ້ງໃຈນຳໃຊ້ເທັກໂນໂລຢີທີ່ທັນສະໄໝເຂົ້າໃນວຽກງານຊ່ວຍເຫຼືອສັງຄົມໂດຍບໍ່ຫວັງຜົນກຳໄລ ແລະ ບໍ່ມີຄ່າທຳນຽມ ການບໍລິຈາກກໍ່ງ່າຍ,ເຊິ່ງຈະຊ່ວຍໃຫ້ຜູ້ຫຍຸ້ງຍາກໄດ້ຮັບການຊ່ວຍເຫຼືອຕາມຄວາມເໝາະສົມ, ຜູ້ທີ່ບໍລິຈາກກໍ່ມີຄວາມໝັ້ນໃຈໄດ້ວ່າການບໍລິຈາກຂອງຕົນຈະເຖິງມືຜູ້ຕ້ອງການຄວາມຊ່ວຍເຫຼືອແທ້. BCEL Oneheart ຈະເຮັດໜ້າທີ່ເປັນສື່ກາງ ລະຫວ່າງ ຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໝັກໃຈບໍລິຈາກ ເຊິ່ງທຸລະກຳທັງໝົດແມ່ນດຳເນີນການ ທາງ Online ຜ່ານ BCEL One ຫຼື Onepay. ລູກຄ້າທີ່ໃຊ້ BCEL One ທຸກຄົນສາມາດເປີດຂໍຮັບບໍລິຈາກໃຫ້ແກ່ບຸກຄົນທີ່ເຫັນສົມຄວນ ໂດຍການສະເໜີຂໍເປີດ QR Code ຜ່ານ BCEL OneHeart ທີ່ມີຄວາມວ່ອງໄວ,ໂປ່ງໃສ ແລະ ສາມາດກວດສອບໄດ້.
3. ເງິນຝາກມີກຳນົດທີ່ຫຼາກຫຼາຍ (ໝັ້ນໃຈຝາກໄວ້ກັບ BCEL): ເພີ່ມທາງເລືອກໄລຍະເວລາຂອງເງິນຝາກມີກຳນົດໃຫ້ມີຄວາມຫຼາກຫຼາຍຂຶ້ນເຊັ່ນ: ເງິນຝາກມີກຳນົດ 09 ເດືອນ, 15 ເດືອນ, 18 ເດືອນ, 21 ເດືອນ, 30 ເດືອນ, 42 ເດືອນ ແລະ 54 ເດືອນ. ນອກນັ້ນ ທຄຕລ ໄດ້ປັບປຸງຮູບແບບການຈ່າຍດອກເບ້ຍເງິນຝາກມີກຳນົດຄືນໃໝ່ ໂດຍ ທຄຕລ ຈະຈ່າຍດອກເບ້ຍຕາມໄລຍະເວລາທີ່ຝາກຕົວຈິງ ເຖິງແມ່ນຈະປິດບັນຊີ ກ່ອນກຳນົດກໍ່ຕາມການປັບປຸງຮູບແບບການຈ່າຍດອກເບ້ຍນີ້ລູກຄ້າຈະເປັນຜູ້ໄດ້ຮັບຜົນປະໂຫຍດສູງສຸດ.




4. BCEL CDM ຕູ້ຮັບຝາກເງິນ (ຝາກເງິນໄດ້ຕະຫຼອດ 24 ຊົ່ວໂມງ): ແມ່ນຕູ້ຝາກເງິນອັດຕະໂນມັດຂອງ ທຄຕລ, ທຄຕລ ໄດ້ເລີ່ມນຳໃຊ້ຕູ້ຝາກເງິນທ້າຍປີ 2014, ປະຈຸບັນແມ່ນສາມາດຮັບໄດ້ 3 ສະກຸນ: ສະກຸນເງິນກີບ, ບາດ ແລະ ໂດລາ ທັງສາມສະກຸນສາມາດຝາກເງິນໄດ້ສູງສຸດ 50 ໃບ/ຄັ້ງ ແລະ ບໍ່ຈຳກັດຈຳນວນຄັ້ງ/ມື້/ບັນຊີ, ສາມາດຝາກເງິນ ແລະ ກວດຍອດເງິນໄດ້ ຕະຫຼອດ 24 ຊົ່ວໂມງ. BCEL CDM ໄດ້ສ້າງຄວາມສະດວກໃຫ້ລູກຄ້າທີ່ຕ້ອງການຝາກເງິນໃນເວລານອກໂມງການ ແລະ ວັນພັກໄດ້. ປະຈຸບັນແມ່ນມີຕູ້ຮັບຝາກເງິນແລ້ວ 13 ໜ່ວຍທີ່ ນະຄອນຫຼວງວຽງຈັນ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ, ຫຼວງພະບາງ ແລະ ຈະສືບຕໍ່ຂະຫຍາຍໃຫ້ກວ້າງຂວາງຕື່ມອີກ.

5. BCEL Smart Book (ປຶ້ມບັນຊີຍຸກໃໝ່ເພື່ອຊີວິດທາງການເງິນທີ່ດີກວ່າ): ແມ່ນປຶ້ມບັນຊີຮູບແບບໃໝ່ ທີ່ຈະເຮັດໃຫ້ທຸກປຶ້ມບັນຊີ ທຄຕລ ສະກຸນເງິນ: ກີບ, ບາດ, ໂດລາ ຂອງທ່ານ ສາມາດນຳໃຊ້ຢູ່ໃນ Smart phone, Tablet ແລະ Web Browser ໄດ້, ພຽງແຕ່ທ່ານມີແອັບ BCEL One ແລະ ອິນເຕີເນັດເທົ່ານັ້ນກໍ່ສາມາດສະໝັກ ນຳໃຊ້ໄດ້ເຊິ່ງຈະຊ່ວຍທ່ານ ແລະ ລູກຄ້າທະນາຄານ ໃຫ້ສາມາດຕິດຕາມການເຄື່ອນໄຫວບັນຊີເງິນຝາກຂອງຕົນ ໂດຍບໍ່ຈຳເປັນເຂົ້າມາທະນາຄານເພື່ອພິມປຶ້ມເງິນຝາກອີກຕໍ່ໄປ.




ການເປີດການນຳໃຊ້ 5 ຜະລິດຕະພັນດັ່ງກ່າວມາຂ້າງເທິງນັ້ນ ແມ່ນຈະຊ່ວຍໃຫ້ລູກຄ້າ, ສະດວກສະບາຍທັນສະໄໝຕອບສະໜອງການໃຊ້ຊີວິດໃນປະຈຸບັນ, ສັງຄົມມີຄວາມທັນສະໄໝ ການຊໍາລະສະສາງສະດວກວ່ອງໄວ ຜູ້ຊື້ສະບາຍ, ຜູ້ຂາຍສະດວກ, ຈະຊ່ວຍກະຕຸ້ນທຸລະກິດ-ເສດຖະກິດພາຍໃນ ພ້ອມທັງສົ່ງເສີມການນຳໃຊ້ເງິນກີບ, ຫຼຸດຜ່ອນຄວາມສ່ຽງ ແລະ ຕົ້ນທຶນທີ່ຕິດພັນກັບເງິນສົດ, ເປັນການໝູນໃຊ້ເທັກໂນໂລຢີທີ່ທັນສະໄໝ, ປອດໄພກວດສອບໄດ້ ແລະ ໄດ້ມາດຕະຖານສາກົນ ເຂົ້າໃນການປະກອບສ່ວນສ້າງສາພັດທະນາປະເທດຊາດ.

ໃນຍຸກແຫ່ງການພັດທະນາທີ່ເທັກໂນໂລຢີ ມີຄວາມກ້າວໜ້າສູງ, BCEL ຈະສືບຕໍ່ພັດທະນາຜະລິດຕະພັນຢ່າງບໍ່ຢຸດຢັ້ງ ໂດຍທຸກຜະລິດຕະພັນ ທຄຕລ ແມ່ນເນັ້ນຄວາມທັນສະໄໝ, ສະດວກສະບາຍ, ມີຄວາມປອດໄພ ກວດສອບໄດ້ ແລະ ໄດ້ມາດຕະຖານສາກົນ ໂດຍຄຳນຶງເຖິງຄວາມຕ້ອງການຂອງລູກຄ້າ ບົນພື້ນຖານຄວາມຮັບຜິດຊອບສູງຕໍ່ສັງຄົມ. ເພື່ອໃຫ້ລູກຄ້າ ແລະ ສັງຄົມໄດ້ຮັບປະໂຫຍດສູງສຸດ.

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

**ທັນສະໄໝ ວ່ອງໄວ ໝັ້ນໃຈ**

1555 | BCEL Bank | www.bcel.com.la

ຂຽນຂ່າວໂດຍ: ນາງ ສຸກສາຄອນ ບຸນສະຫວັດທິພັນ
ພະແນກຄົ້ນຄວ້າ, ພັດທະນາ ແລະ ການຕະຫຼາດ
ໂທ: 021 213200-407